**LOWELL PUBLIC SCHOOLS**
Henry J. Mroz Central Administration Offices
155 Merrimack Street
Lowell, MA 01852

3 ພຶດສະພາ 2020

ໂຮງຮຽນ Lowell Public Schools ມີຄວາມຍິນດີທີ່ຈະປະກາດລາຍຊື່ຜູ້ເຂົ້າຮອບສຸດທ້າຍທັງສາມທ່ານ ທີ່ຈະໄດ້ຮັບການພິຈາລະນາໃຫ້ຮັບຕໍາແໜ່ງຜູ້ອໍານວຍການຂອງໂຮງຮຽນ Lowell High School (ເຊິ່ງມີລາຍຊື່ຮຽງຕາມຕົວອັກສອນດັ່ງລຸ່ມນີ້):

- **Ian Charles** ໃນບໍ່ດົນມານີ້ແມ່ນໄດ້ຮັບຕໍາແໜ່ງໃຫ້ເປັນຜູ້ອໍານວຍການຂອງໂຮງຮຽນ Codman Academy, ເຊິ່ງເປັນໂຮງຮຽນໃນການດູແລຂອງລັດຖະບານຢູ່ທີ່ເມືອງ Dorchester. ລາວໄດ້ເລີ່ມຕົ້ນອາຊີບໃນຖານະການເປັນນັກການສຶກສາທີ່ໂຮງຮຽນ Lowell Public Schools ແລະ ໄດ້ສືບຕໍ່ອາຊີບການສອນຢູ່ລັດ Florida, ກ່ອນທີ່ຈະກັບມາທີ່ລັດ Massachusetts. ລາວໄດ້ເຮັດໜ້າທີ່ເປັນທັງຜູ້ຊ່ວຍອໍານວຍການ ແລະ ຜູ້ອໍານວຍການຂອງໂຮງຮຽນຕ່າງໆໃນລັດ Massachusetts. ປະຈຸບັນລາວຍັງເປັນຜູ້ທີ່ກໍາລັງສຶກສາລະດັບປະລິນຍາເອກທີ່ມະຫາວິທະຍາໄລ Northeastern University, College of Professional Studies (ວິທະຍາໄລການສຶກສາດ້ານສາຂາອາຊີບ) ໃນສາຂາຄວາມເປັນຜູ້ນໍາດ້ານການບໍລິຫານ.

- **Michael Fiato** ເຮັດໜ້າທີ່ເປັນຜູ້ບໍລິຫານດ້ານການໃຫ້ຄວາມຊ່ວຍເຫຼືອກຸ່ມເປົ້າໝາຍສໍາລັບລະບົບການສະໜັບສະໜູນທົ່ວລັດ ທີ່ກົມການສຶກສາຂັ້ນປະຖົມ ແລະ ຂັ້ນມັດທະຍົມສຶກສາ. ກ່ອນທີ່ຈະເຂົ້າຮ່ວມ DESE, ລາວໄດ້ດໍາລົງຕໍາ ແໜ່ງເປັນຜູ້ອໍານວຍການຂອງໂຮງຮຽນ Lawrence High School ແລະ ກ່ອນໜ້ານັ້ນກໍໄດ້ເປັນຜູ້ອໍານວຍການຂອງໜຶ່ງໃນບັນດາຫົກໂຮງຮຽນຂອງ Lawrence High.

- **Dr. Sara P. Walsh** ປະຈຸບັນດໍາລົງຕໍາແໜ່ງເປັນຜູ້ອໍານວຍການຂອງໂຮງຮຽນ Algonquin Regional High School. ນາງມີໃບອະນຸຍາດການສອນໃນສາຂາວິຊາຊີວະວິທະຍາ ແລະ ຄະນິດສາດ, ໂດຍເນັ້ນໄປທີ່ດ້ານສະລີລະວິທະຍາ. ນອກຈາກນັ້ນ, ນາງຍັງມີບົດບາດໃນຖານະຮອງຜູ້ອໍານວຍການ, ຜູ້ຊ່ວຍອໍານວຍການ ແລະຜູ້ອໍານວຍການຂອງໂຮງຮຽນ Springfield Public Schools.

ຊີວະປະຫວັດສະບັບເຕັມຂອງຜູ້ເຂົ້າຮອບສຸດທ້າຍແຕ່ລະທ່ານ ແມ່ນໄດ້ໂພດລົງໄວ້ໃນເວັບໄຊນີ້:
https://www.lowell.k12.ma.us/LowellHighHeadofSchoolFinalistsBio

ອໍານາດການປົກຄອງຂັ້ນເມືອງຈະດໍາເນີນການຈັດເວທີປະຊຸມແບບອອນລາຍສາມຄັ້ງໃນອາທິດໜ້າ, ເພື່ອໃຫ້ປະຊາຊົນໄດ້ມີໂອກາດພົບປະກັບຜູ້ເຂົ້າຮອບສຸດທ້າຍແຕ່ລະທ່ານ ພ້ອມທັງຖາມຄໍາຖາມກ່ຽວກັບປະຫວັດ ແລະ ວິໄສທັດຂອງພວກເຂົາທີ່ມີຕໍ່ Lowell High.

- ວັນອັງຄານ ທີ 9 ມີຖຸນາ ຕັ້ງແຕ່ເວລາ 5 ໂມງແລງ ຫາ 6 ໂມງແລງ

- ວັນພຸດ ທີ 10 ມີຖຸນາ ຕັ້ງແຕ່ເວລາ 5 ໂມງແລງ ຫາ 6 ໂມງແລງ

- ວັນພະຫັດ ທີ 11 ມີຖຸນາ ຕັ້ງແຕ່ເວລາ 5 ໂມງແລງ ຫາ 6 ໂມງແລງ

ບັນດາລິ້ງເວັບໄຊ Zoom ຂອງເວທີກອງປະຊຸມດັ່ງກ່າວ ຈະໄດ້ຖືກໂພດລົງໃນເວັບໄຊ ແລະ ໂພດລົງໃນສື່ສັງຄົມອອນລາຍຂອງອຳນາດການປົກຄອງຂັ້ນເມືອງ ໃນວັນຈັນທີ 8 ມີຖຸນາ 2020. ຖ້າທ່ານສົນໃຈທີ່ຈະຖາມຄຳຖາມ, ກະລຸນາສົ່ງຄຳຖາມຂອງທ່ານມາກ່ອນເວທີກອງປະຊຸມຂອງຊຸມຊົນ ໂດຍການສົ່ງອີເມວໄປທີ່ community@lowell.k12.ma.us. ເຊິ່ງກຳນົດເວລາປິດຮັບການສົ່ງຄຳຖາມແມ່ນ ວັນອັງຄານທີ 9 ມີຖຸນາ 2020 ໃນເວລາຕອນທ່ຽງ.

ກ່າວໂດຍສະຫຼຸບແລ້ວ, ມີທັງໝົດ 22 ທ່ານທີ່ໄດ້ທຳການສະໝັກຕຳແໜ່ງດັ່ງກ່າວ. Lowell High School Search Committee (ຄະນະກຳມະການຄົ້ນຄວ້າຂອງໂຮງຮຽນ) - ເຊິ່ງເປັນຕົວແທນຂອງກຸ່ມຄົນທີ່ຫຼາກຫຼາຍ ໂດຍປະກອບໄປດ້ວຍນັກຮຽນ, ພໍ່ແມ່ຜູ້ປົກຄອງ, ຄູອາຈານ, ຜູ້ບໍລິຫານ ແລະ ຄູ່ຮ່ວມງານໃນຊຸມຊົນ - ໄດ້ເປັນຜູ້ທຳການລະບຸຫາ ແລະ ສຳພາດຜູ້ສະໝັກ 12 ອັນດັບທຳອິດ, ກ່ອນທີ່ຈະທຳການຄັດເລືອກຜູ້ເຂົ້າຮອບສຸດທ້າຍທັງສາມທ່ານ. ຄະນະກຳມະການຄົ້ນຄວ້າດັ່ງກ່າວໄດ້ຮັບການມອບໝາຍໃຫ້ກວດສອບໜ້າວຽກຂອງຕຳແໜ່ງດັ່ງກ່າວຄືນໃໝ່, ປະກອບສ່ວນໃນການວາງແນວທາງຕໍ່ຕ້ານການມີອະຄະຕິ, ກວດສອບຂໍ້ມູນທີ່ໄດ້ຮັບຈາກແບບສຳຫຼວດຂອງຊຸມຊົນ, ອອກແບບຄຳຖາມທີ່ໃຊ້ໃນການສຳພາດ, ກວດສອບເອກະສານການສະໝັກ ແລະ ສະເໜີລາຍຊື່ຂອງຜູ້ເຂົ້າຮອບສຸດທ້າຍທັງສາມທ່ານ.

ບັນດາສະມາຊິກຂອງຄະນະກຳມະການຄົ້ນຄວ້າປະກອບມີ:

- ນັກຮຽນ: Jaeda Turner ແລະ Princess-Henna Wilson
- ພໍ່ແມ່ຜູ້ປົກຄອງ: Heather Forythe, Luis Raudales, Brian Snow
- UTL (United Teachers of Lowell (ສະຫະພັນຄູແຫ່ງ Lowell)): Nancy Connelly, MaryAnn Dyson, Kristen Schultz
- LSAA (Lowell School Administrators Association (ສະມາຄົມຜູ້ບໍລິຫານໂຮງຮຽນ Lowell School)): Deidre Haley & Rose Mendoca
- SEIU (Service Employees International Union (ສະມາຄົມຜູ້ໃຫ້ບໍລິການພະນັກງານສາກົນ)): Joan Marias
- ຄູ່ຮ່ວມງານການສຶກສາຂັ້ນສູງ: Dr. Ellen Grondine, MCC & Dr. Phitsamy Uy, UML
- ອົງການຈັດຕັ້ງຊຸມຊົນ: LZ Nunn, ໂຄງການ LEARN
- ສະມາຊິກຂອງຄະນະກຳມະການໂຮງຮຽນ: Hilary Clark, Personnel Chair (ປະທານຝ່າຍບຸກຄົນ)

- ຜູ້ອໍານວຍຄວາມສະດວກ LPS: Linus J. Guillory Jr., PhD & Daroth Yann, HR

ຫຼັງຈາກເວທີກອງປະຊຸມຂັ້ນຊຸມຊົນໄດ້ຮັບການຈັດຕັ້ງຂຶ້ນແລ້ວ, ຂະບວນການດັ່ງກ່າວຈະປິດທ້າຍດ້ວຍການສໍາພາດຮອບສຸດທ້າຍໂດຍ Dr. Joel Boyd, Lowell Public Schools Superintendent (ຜູ້ບໍລິຫານໂຮງຮຽນ Lowell Public Schools).